ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
***********000************

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 018..../ອອປສ
ນະຄອນຫຼວງວຽງຈັນ, ວັນທີ.25./.11../2013

# ຄຳແນະນຳ
# ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

**ເຖິງ :** ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານໃນຂອບເຂດທົ່ວປະເທດ.
**ເລື່ອງ:** ແນະນຳການຈັດຕັ້ງປະຕິບັດມາດຕາ 34, ມາດຕາ 36 ຂອງກົດໝາຍວ່າດ້ວຍຢາເສບຕິດ

- ອີງຕາມ ກົດໝາຍອາຍາສະບັບປັບປຸງປີ 2005
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດສະບັບ ປີ 2007
- ອີງຕາມ ມາດຕາ 10,13,27 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009.
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2012
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບປັບປຸງເລກທີ 22/ສພຊ ລົງວັນທີ 11/ 12/ 2012

ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດຕາມມາດຕາ 34 ວັກ 4 ແລະ ມາດຕາ 36 ວັກ 4 ຂອງກົດໝາຍວ່າດ້ວຍຢາເສບຕິດ ໃຫ້ເປັນໄປຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ.

ຫ້ອງການໄອຍະການປະຊາຊົນສູງສຸດຈຶ່ງອອກຄຳແນະນຳດັ່ງນີ້:

1. ກົດໝາຍວ່າດ້ວຍຢາເສບຕິດ

1.1. ມາດຕາ 34 ວັກ 4 ກ່ຽວກັບຂອງກາງ

ໃນກໍລະນີທີ່ມີການຮັບສາລະພາບຂອງຜູ້ຖືກຫາແຕ່ບໍ່ມີຂອງກາງນັ້ນຕ້ອງໄດ້ຊອກຫາພະຍານ, ຫລັກຖານອື່ນໃນຄະດີມາຢັ້ງຢືນເພື່ອຕັດສິນ.

ໃນຄຳວ່າ: ຕ້ອງໄດ້ຊອກຫາພະຍານ, ຫລັກຖານອື່ນໃນຄະດີມາຢັ້ງຢືນເພື່ອຕັດສິນໃນກໍລະນີທີ່ບໍ່ມີຂອງກາງ ( ຢາເສບຕິດ ) ນັ້ນຕ້ອງຊອກຫາຫຼັກຖານອື່ນເຊັ່ນວ່າ:

- **ຫລັກຖານທາງດ້ານວັດຖຸ:** ຕ້ອງແມ່ນໄດ້ມາຈາກວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດເຊັ່ນ: ຍານພາຫະນະທີ່ມີການດັດແປງໃນການຊຸກເຊື່ອງຢາເສບຕິດ, ເຄື່ອງຈັກສຳລັບອັດເມັດ, ແທ່ງ, ມັດ, ຖົງ, ຢາເສບຕິດ ແລະ ທາດຕ່າງໆທີ່ນຳໄປປະສົມກັບທາດຢາເສບຕິດ, ຖົງ ຫຼື ຫີບຫຸ້ມຫໍ່ທີ່ມີຄາບຢາເສບຕິດຕິດຢູ່, ເງິນ ແລະ ວັດຖຸມີຄ່າທີ່ກ່ຽວພັນໃນການຊື້ຂາຍຢາເສບຕິດໂດຍຈະຕ້ອງໄດ້ຜ່ານການກວດກາພິສູດຊັ່ງຊາຕີລາຄາ ກ່ຽວກັບທີ່ມາຂອງເງິນ ແລະ ວັດຖຸທີ່ມີຄ່າຢ່າງຈະແຈ້ງ.
- **ຫລັກຖານທາງດ້ານເອກະສານ:** ແມ່ນໄດ້ມາຈາກຈົດໝາຍທີ່ມີການພົວພັນເຖິງບັນຫາຢາເສບຕິດ , ບົດບັນທຶກການສືບສວນ-ສອບສວນ, ປື້ມບັນທຶກ, ບັນຊີເງິນຝາກ, ເບີໂທລະສັບຕິດຕໍ່, ແຜນວາດເສັ້ນທາງການຈໍລະຈອນຢາເສບຕິດຂອງຜູ້ກະທຳຜິດ, ຮູບພາບ ແລະ ເອກະສານອື່ນໆທີ່ກ່ຽວພັນກັບການກະທຳຜິດ.
- **ຫລັກຖານທາງດ້ານບຸກຄົນ:** ແມ່ນໄດ້ມາຈາກຄຳໃຫ້ການຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫລື ຈຳເລີຍ, ຂອງພະຍານ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ, ການຊີ້ຕົວ, ການຢັ້ງຢືນ, ຄຳເຫັນຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທີ່ພົວພັນກັບການກະທຳຜິດ.

ບັນດາຂໍ້ມູນຫຼັກຖານທັງໝົດຈະຕ້ອງໄດ້ຜ່ານຂັ້ນຕອນ, ຂະບວນການກວດກາພິສູດຢ່າງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ຊຶ່ງມັນສະແດງອອກດັ່ງນີ້:

❖ ຮອບດ້ານ: ໝາຍເຖິງການດຳເນີນຄະດີຕ້ອງຊອກຫາຫຼັກຖານທັງຜູກມັດ ແລະ ແກ້ມັດ ໂດຍຕ້ອງໄດ້ຄົ້ນຄວ້າຫຼັກຖານທີ່ຢັ້ງຢືນການກະທຳຜິດ ແລະ ຢັ້ງຢືນຄວາມບໍລິສຸດຂອງຜູ້ຖືກຫາ, ຖ້າມີການກະທຳຜິດແລ້ວຕ້ອງໄດ້ຊອກຫາວ່າມີສາເຫດທີ່ພາໃຫ້ເພີ່ມ ຫຼື ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາຂອງຜູ້ຖືກຫາ. ຖ້າມີຫຼັກຖານຢັ້ງຢືນຄວາມບໍລິສຸດຂອງຜູ້ຖືກຫາແລ້ວ ຖືວ່າຜູ້ກ່ຽວບໍ່ມີຄວາມຮັບຜິດຊອບທາງອາຍາ.

❖ ຄົບຖ້ວນ: ໝາຍຄວາມວ່າຂໍ້ມູນຫຼັກຖານຕ່າງໆ ທີ່ເກັບກຳມາໄດ້ນັ້ນຄົບຖ້ວນ, ໜັກແໜ້ນ ແລະ ມີຄົບ 4 ອົງປະກອບຂອງການກະທຳຜິດທາງອາຍາ. ຫຼັກຖານທີ່ໄດ້ມານັ້ນຕ້ອງໄດ້ຄົ້ນຄວ້າວິໄຈຢ່າງຮອບດ້ານ ແລະ ພາວະວິໄສໃນແຕ່ລະຫຼັກຖານ ແລ້ວຈຶ່ງມາສະຫຼຸບ ຊັ່ງຊາ ຕີລາຄາ ໂດຍບໍ່ໃຫ້ຖືເອົາພຽງແຕ່ຂໍ້ມູນໃດຂໍ້ມູນໜຶ່ງມາຄົ້ນຄວ້າແລ້ວຕີລາຄາວ່າ ຜູ້ຖືກຫາເປັນຜູ້ກະທຳຜິດໂລດ.

❖ ພາວະວິໄສ: ໝາຍຄວາມວ່າໃນການຄົ້ນຄວ້າຊັ່ງຊາຕີລາຫຼັກຖານນັ້ນ ຕ້ອງຖືເອົາກົດໝາຍເປັນພື້ນຖານໃນການປະຕິບັດ, ການດຳເນີນຄະດີຕ້ອງຢູ່ບົນພື້ນຖານກົດໝາຍ ແລະ ຄວາມຍຸຕິທຳ ຂໍ້ມູນຫຼັກຖານຕ້ອງໄດ້ມາຈາກເຫດການຕົວຈິງ ແລະ ບໍ່ສ້າງຂຶ້ນມາເອງ ຫຼີກເວັ້ນບັນຫາທາງດ້ານອາລົມຈິດນິຍົມ, ດ້ານ